ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ.

ກະຊວງສຶກສາທິການ ແລະ ກິລາ

ກົມສ້າງຄູ

ວິທະຍາໄລຄູສາລະວັນ

ເລກທີ 5196/ວຄວ

ທີ່ສາລະວັນ, ລົງວັນທີ 28 JUL. 2025

# ແຈ້ງການ

**ຮຽນ:** ທ່ານຄະນະບໍດີຄະນະສຶກສາສາດ ມະຫາວິທະຍາໄລ ແລະ ບັນດາທ່ານຜູ້ອຳນວຍການວິທະຍາໄລຄູແຫ່ງຕ່າງໆ ທີ່ເຄົາລົບ ແລະ ນັບຖື.

ປັນຍາຊົນ ແລະ ຄົ້ນຄວ້າວິໄຈທົ່ວໄປ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄົາລົບ ແລະ ນັບຖື.

**ເລື່ອງ:** ເປີດຮັບບົດຄວາມວິໄຈແລະ ບົດຄວາມວິຊາການທາງການສຶກສາ ເພື່ອເຜີຍແຜ່ ແລະ ຕີພິມລົງວາລະສານ ***ການສຶກສາຄູລາວແບບຍືນຍົງ*** (Lao Journal of Sustainable Teacher Education : LJSTE) ວິທະຍາໄລຄູສາລະວັນ ເຫຼັ້ມທີ 2.

- **ອີງຕາມ:** ແຜນປັບປຸງຄຸນນະພາບ QA ໃນມາດຕະຖານທີ 10 ຕົວຊີ້ບອກທີ 48-50 ຂອງກະຊວງສຶກສາທິການ ແລະ ກິລາ.
- **ອີງຕາມ:** ແຜນພັດທະນາພະແນກຄົ້ນຄວ້າວິທະຍາສາດ ແລະ ພັດທະນາວິຊາຊີບຄູ ວິທະຍາໄລຄູສາລະວັນ ສົກຮຽນ 2024 – 2025.

ຜູ້ອຳນວຍການວິທະຍາໄລຄູສາລະວັນ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ ວິທະຍາໄລຄູສາລະວັນ ເປີດຮັບບົດຄວາມວິໄຈ ແລະ ບົດຄວາມວິຊາການໃນຂົງເຂດ **1) ການພັດທະນາຫຼັກສູດ ແລະ ການຮຽນການສອນ, 2) ການພັດທະນາວິຊາຊີບຄູແບບຕໍ່ເນື່ອງ, 3) ການສຶກສາເພື່ອການພັດທະນາແບບຍືນຍົງ, 4) ວັດທະນະທຳ ແລະ ສັງຄົມ, 5) ການຄົ້ນຄວ້າ ແລະ ນະວັດຕະກຳທາງການສຶກສາ, 6) ການຄຸ້ມຄອງ ແລະ ຜູ້ນຳທາງການສຶກສາ ແລະ 7) ການສຶກສາແບບບູລະນາການ** ເພື່ອຕີພິມເຜີຍແຜ່ລົງໃນວາລະສານ ການສຶກສາຄູລາວແບບຍືນຍົງ ປີທີ I ສະບັບທີ 2 (ເດືອນຕຸລາ ຫາ ເດືອນ ທັນວາ) ສະນັ້ນ, ຈຶ່ງຂໍແຈ້ງເຊີນມາຍັງທ່ານ ເພື່ອແຈ້ງຕໍ່ພະນັກງານ-ຄູອາຈານ ຫຼື ນັກຄົ້ນຄວ້າວິໄຈ ພາຍໃນສະຖານສຶກສາ ຫຼື ອົງກອນຂອງທ່ານ ໂດຍສະເພາະຜູ້ທີ່ໄດ້ເຮັດການຄົ້ນຄວ້າວິໄຈ ແລະ ມີຄວາມສົນໃຈ ຕີພິມລົງວະລະສານ (ການສຶກສາຄູລາວແບບຍືນຍົງ **ເລກລະຫັດ ISSN 3080-0056**) ປີທີ I ສະບັບທີ 2 ທີ່ວິທະຍາໄລຄູສາລະວັນ.

ສแกนด้วย CamScanner

ເຊິ່ງລາຍລະອຽດຂອງຂະບວນການສົ່ງຕີພິມມີດັ່ງລຸ່ມນີ້.

- ສົ່ງບົດຄວາມວິໄຈ ຫຼື ບົດຄວາມວິຊາການທາງເວັບໄຊວາລະສານການສຶກສາຄູລາວແບບຍືນຍົງ ຂອງ ວິທະຍາໄລຄູສາລະວັນ ໂດຍເຂົ້າໄດ້ທີ່ https://www.sttcjournal.edu.la ແລ້ວທະບຽນຜູ້ຂຽນ ເພື່ອ ສົ່ງບົດຄວາມ ແລວ່າຍຄ່າທຳນຽມຕີພິມເຜີຍແຜ່.
- ກຳນົດສົ່ງບົດຄວາມວິໄຈ ຫຼື ບົດຄວາມວິຊາການດັ່ງກ່າວໃຫ້ພະແນກຄົ້ນຄວ້າວິທະຍາສາດ ແລະ ພັດທະນາວິຊາຊີບຄູ ວິທະຍາໄລຄູສາລະວັນ ບໍ່ໃຫ້ກາຍວັນທີ 30 ສິງຫາຄົມ 2025.
- ຄ່າລົງທະບຽນຕີພິມລົງວາລະສານແມ່ນມີ 4 ລະດັບຄື: ນັກສຶກສາພາຍໃນ 200,000 ກີບ, ນັກຄົ້ນຄວ້າ ພາຍໃນ 300,000 ກີບ, ນັກຄົ້ນຄວ້າພາຍນອກ 400,000 ກີບ, ນັກຄົ້ນຄວ້າຕ່າງປະເທດ 800,000 ກີບ .
- ສຳລັບຮູບແບບ (format) ບົດຄວາມວິໄຈ ແລະ ບົດຄວາມວິຊາການ ສາມາດດາວໂລດໄດ້ໃນເວັບໄຊ ວາລະສານວິທະຍາໄລຄູ.
- ມີຂໍ້ສົງໄສ ຫຼື ຕ້ອງການມູນເພີ່ມເຕີມສາມາດຕິດຕໍ່ ແລະ ພົວພັນໄດ້ໂດຍກົງກັບ: ທ່ານຂັນທະລີ ແສງ ສະຫວ່າງ ເບີໂທ ແລະ ເບີວັອດແອັບ 020-77414840; ທ່ານ ສີສຸກ ສາຍເວຫາ ເບີໂທ ແລະ ເບີວັອດ ແອັບ +66 969309975, ອາຈານ ປອ ໂພທອງ ພົງສິງຄາມ ເບີໂທ ແລະ ເບີວັອດແອັບ 020- 29023090.

ດັ່ງນັ້ນ, ຈຶ່ງໄດ້ຖືເປັນກຽດຢ່າງສູງແຈ້ງເຊີນມາຍັງທ່ານເພື່ອຊາບ ແລະ ຫວັງຢ່າງຍິ່ງວ່າຈະໄດ້ຮັບການ ຄົ້ນຄວ້າພິຈາລະນາ ແລະ ຮ່ວມກັນປະຕິບັດຕາມແຈ້ງການສະບັບນີ້ດ້ວຍຕາມຄວາມເໝາະສົມ.

ວັນທີ 28 JUL 2025

**ຜູ້ອຳນວຍການວິທະຍາໄລຄູ**

ວິທະຍາໄລຄູ ສາລະວັນ

ວັດທະນາ ໝັ້ນວິໄລ